ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 3426 /ປທສ.

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2016

# ຂໍ້ຕົກລົງ
# ວ່າດ້ວຍ ການນຳໃຊ້ເລກໝາຍໂທລະສັບພິເສດ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) , ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ໜັງສືສະເໜີຂອງກົມໂທລະຄົມມະນາຄົມ, ສະບັບເລກທີ 1518/ກທຄ, ລົງວັນທີ 07 ທັນວາ 2016.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງ ສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາການນຳໃຊ້ເລກໝາຍໂທລະສັບພິເສດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຊຸກຍູ້ການນຳໃຊ້ໃຫ້ຖືກຕ້ອງຕາມລະບຽບການ ແລະ ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ ແລະ ສັງຄົມ.

**ມາດຕາ 2 ເລກໝາຍໂທລະສັບພິເສດ**

ເລກໝາຍໂທລະສັບພິເສດ ແມ່ນຊັບພະຍາກອນເລກໝາຍໂທລະຄົມມະນາຄົມ ທີ່ກຳນົດຂຶ້ນເພື່ອນຳໃຊ້ໃນວຽກງານສຸກເສີນ, ບໍລິການສາທາລະນະ, ອົງການຈັດຕັ້ງລັດ, ບໍລິການສັງຄົມ ແລະ ບໍລິການລູກຄ້າພາຍໃນເຄືອຂ່າຍຂອງຜູ້ໃຫ້ການບໍລິການໂທລະຄົມມະນາຄົມ. ເລກໝາຍໂທລະສັບພິເສດ ຈັດສັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ສັງຄົມ ຫຼື ຜູ້ນຳໃຊ້ ຈື່ງ່າຍ ແລະ ໂທເຂົ້າຫາເລກໝາຍໄດ້ໄວຂຶ້ນ

ເລກໝາຍໂທລະສັບພິເສດ ຈັດເປັນ 03 ປະເພດດັ່ງນີ້:

**ປະເພດ 1** ແມ່ນເລກໝາຍທີ່ນຳໃຊ້ໃນວຽກງານສຸກເສີນ, ວຽກງານສາທາລະນະ, ວຽກງານອົງການຈັດຕັ້ງລັດ ແລະ ວຽກງານຮັບໃຊ້ບໍລິການສັງຄົມ, ຜູ້ໃຊ້ບໍລິການສາມາດໂທເຂົ້າຫາເລກໝາຍດັ່ງກ່າວ ໄດ້ທຸກເວລາຈາກທຸກລະບົບໂທລະສັບຂອງທຸກເຄືອຂ່າຍ ໂດຍບໍ່ເສຍຄ່າບໍລິການໂທເຂົ້າ.

**ປະເພດ 2** ແມ່ນເລກໝາຍທີ່ນຳໃຊ້ວຽກງານຂອງ ນິຕິບຸກຄົນ, ອົງການຈັດຕັ້ງ ທີ່ສຳຄັນຈຳນວນໜຶ່ງທີ່ມີການຕິດຕໍ່ພົວພັນຈາກສັງຄົມຈຳນວນຫຼາຍ ໃນການພົວພັນວຽກງານທຸລະກິດ ຜູ້ໃຊ້ບໍລິການສາມາດໂທເຂົ້າໄດ້ຈາກທຸກລະບົບໂທລະສັບ ຂອງທຸກເຄືອຂ່າຍ, ເສຍຄ່າໂທເຂົ້າ ຄືກັບເລກໝາຍໂທລະສັບທົ່ວໄປ.

**ປະເພດ 3** ແມ່ນເລກໝາຍທີ່ນຳໃຊ້ບໍລິການສະເພາະລູກຄ້າພາຍໃນເຄືອຂ່າຍຂອງຕົນ ນຳໃຊ້ເປັນບໍລິການເສີມ ພາຍໃນເຄືອຂ່າຍໂທລະຄົມມະນາຄົມຂອງຕົນ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

3.1. ເລກໝາຍໂທລະສັບພິເສດ ໝາຍເຖິງ ເລກໝາຍໂທລະສັບ 3 ຫຼື 4 ຕົວເລກ ຂອງ ລະບົບໂທລະສັບຕັ້ງໂຕະພື້ນຖານ(ແບບໃຊ້ສາຍ) ເຊິ່ງຂຶ້ນຕົ້ນດ້ວຍລະຫັດເລກໜຶ່ງ(1) ທີ່ໄດ້ຈັດສັນ ແລະ ກຳນົດການນຳໃຊ້ຕາມແຜນຈັດສັນເລກໝາຍໂທລະສັບພິເສດ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

3.2. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໝາຍເຖິງ ບໍລິສັດ ຫລື ລັດວິສາຫະກິດຜູ້ໃຫ້ບໍລິການໂທລະຄົມມະນາຄົມທຸກລະບົບ;

3.3. ວຽກງານສຸກເສີນ ໝາຍເຖິງ ວຽກງານຮີບດ່ວນເປັນຕົ້ນ ອັກຄີໄພ, ໂຮງໝໍ, ຕຳຫຼວດ, ອຸປະຕິເຫດ, ແລະ ອື່ນໆ;

3.4. ວຽກງານບໍລິການສາທາລະນະ ໝາຍເຖິງ ວຽກງານທີ່ກ່ຽວຂ້ອງກັບວຽກງານຮັບໃຊ້ສັງຄົມ ເປັນຕົ້ນ: ໄຟຟ້າ, ນ້ຳປະປາ, ອົງການລັດບໍລິການສັງຄົມ, ມູນນິທິ, ປະກັນໄພ, ການທະນາຄານ ແລະ ບັນດາບໍລິສັດດຳເນີນທຸລະກິດການຄ້າ ຈຳນວນໜຶ່ງ ທີ່ມີເງື່ອນໄຂຄົບຖ້ວນ.

**ມາດຕາ 4 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ນິຕິບຸກຄົນ, ອົງການຈັດຕັ້ງລັດ, ມູນນິທິ ແລະ ອົງການຊ່ວຍເຫຼືອສັງຄົມທີ່ໄດ້ຮັບອະນຸຍາດເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ ແລະ ບໍລິການນຳໃຊ້ຢູ່ໃນ ສປປ ລາວ.

## ໝວດທີ 2
## ຫຼັກການ ແລະ ເງື່ອນໄຂຂອງຜູ້ໄດ້ຮັບອະນຸຍາດ

**ມາດຕາ 5 ເງື່ອນໄຂການອະນຸຍາດເລກໝາຍໂທລະສັບພິເສດ**

ນິຕິບຸກຄົນ, ອົງການຈັດຕັ້ງລັດ, ມູນນິທິ ແລະ ອົງການຊ່ວຍເຫຼືອສັງຄົມ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ ແລະ ຕ້ອງມີເງື່ອນໄຂການນຳໃຊ້ເລກໝາຍໂທລະສັບພິເສດ, ດັ່ງລຸ່ມນີ້:

- ວຽກງານສຸກເສີນ, ວຽກງານສຳຄັນ ຂອງ ອົງການຈັດຕັ້ງລັດ;
- ວຽກງານບໍລິການສາທາລະນະ;
- ວຽກງານດ້ານທຸລະກິດ(ການຄ້າ) ທີ່ເໝາະສົມ ກວ້າງຂວາງ ແລະ ມີຜູ້ໃຊ້ບໍລິການຈຳນວນຫຼາຍ;
- ບໍລິສັດໃຫ້ບໍລິການໂທລະຄົມມະນາຄົມ ທີ່ມີເຄືອຂ່າຍໂທລະຄົມມະນາຄົມເປັນຂອງຕົນເອງ.

**ມາດຕາ 6 ການປະກອບເອກະສານສະເໜີຂໍອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ**

6.1. ວຽກງານສຸກເສີນ, ວຽກງານສຳຄັນ ຂອງ ອົງການຈັດຕັ້ງລັດ ເອກະສານປະກອບມີ ດັ່ງນີ້:

- ໜັງສືສະເໜີ ເຖິງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອະທິບາຍຈຸດປະສົງການສະເໜີຂໍອະນຸຍາດ ນຳໃຊ້ເລກໝາຍໂທລະສັບພິເສດ;
- ແຈ້ງເລກໝາຍໂທລະສັບຕັ້ງໂຕະພື້ນຖານ(ແບບບໍ່ໃຊ້ສາຍ) ທີ່ນຳໃຊ້ໃນປະຈຸບັນ, ຈຳນວນ 02 ເລກໝາຍຂຶ້ນໄປ ເພື່ອພິຈາລະນາ ແລະ ຕິດຕັ້ງໃສ່ເລກໝາຍໂທລະສັບພິເສດທີ່ສະເໜີຂໍອະນຸຍາດ;
- ແຈ້ງສະຖານທີ່ຕິດຕັ້ງລະອຽດ ແລະ ປະເພດການໃຫ້ບໍລິການເລກໝາຍໂທລະສັບພິເສດ ທີ່ສະເໜີຂໍອະນຸຍາດ.

6.2. ວຽກງານບໍລິການສາທາລະນະ ແລະ ວຽກງານດ້ານທຸລະກິດ(ການຄ້າ) ເອກະສານປະກອບມີ:

- ໜັງສືສະເໜີຈຸດປະສົງ ຕາມແບບຟອມ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
- ຄັດຕິດສຳເນົາໃບທະບຽນວິສາຫະກິດ;
- ບົດວິພາກການນຳໃຊ້ເລກໝາຍໂທລະສັບພິເສດ;
- ໜັງສືລາຍງານສະຖິຕິການໂທເຂົ້າຫາເລກໝາຍໂທລະສັບພື້ນຖານທີ່ນຳໃຊ້ໃນປະຈຸບັນ ຂອງ ຜູ້ສະເໜີຂໍອະນຸຍາດນຳໃຊ້ໄລຍະ 06 ເດືອນຜ່ານມາ ພ້ອມທັງເອກະສານຢັ້ງຢືນ (ຖ້າມີ);
- ແຈ້ງເລກໝາຍໂທລະສັບຕັ້ງໂຕະພື້ນຖານ(ແບບບໍ່ໃຊ້ສາຍ) ທີ່ນຳໃຊ້ໃນປະຈຸບັນ, ຈຳນວນ 03 ເລກໝາຍຂຶ້ນໄປ ເພື່ອພິຈາລະນາແລະ ຕິດຕັ້ງໃສ່ເລກໝາຍໂທລະສັບພິເສດທີ່ສະເໜີຂໍອະນຸຍາດ;
- ແຈ້ງສະຖານທີ່ຕິດຕັ້ງລະອຽດ ແລະ ປະເພດການໃຫ້ບໍລິການເລກໝາຍໂທລະສັບພິເສດ ທີ່ ສະເໜີຂໍອະນຸຍາດ;
- ແຜນການຕິດຕັ້ງ ແລະ ເຊື່ອມຕໍ່ອຸປະກອນເລກໝາຍ (ຖ້າມີ);
- ເອກະສານອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 7 ການຈັດສັນເລກໝາຍໂທລະສັບພິເສດ**

ເລກໝາຍໂທລະສັບພິເສດ ໄດ້ຮັບການຈັດສັນ ແລະ ກຳນົດການນຳໃຊ້ ດັ່ງນີ້:

7.1. ຖືກຕ້ອງຕາມແຜນການຈັດສັນການນຳໃຊ້ເລກໝາຍໂທລະສັບພິເສດ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

7.2. ເລກໝາຍໂທລະສັບພິເສດ ຈັດສັນຕາມເງື່ອນໄຂ ຂອງການນຳໃຊ້ບໍລິການທີ່ສອດຄ່ອງ ແລະ ເໝາະສົມກັບສະພາບໃນແຕ່ລະໄລຍະ.

**ມາດຕາ 8 ອາຍຸໃບອະນຸຍາດນຳໃຊ້**

ໃບອະນຸຍາດມີອາຍຸນຳໃຊ້ 01 ປີ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ ຜູ້ໄດ້ຮັບໃບອະນຸຍາດຕ້ອງເລີ່ມນຳໃຊ້ບໍລິການເລກໝາຍ ພາຍໃນ 30 ວັນ ຫຼັງຈາກ ທີ່ໄດ້ຮັບອະນຸຍາດ ຫຼື ພາຍຫຼັງສຳເລັດການຕິດຕັ້ງນຳໃຊ້ເລກໝາຍ;

ຜູ້ໄດ້ຮັບອະນຸຍາດ ສະເໜີຂໍຍົກເລີກການນຳໃຊ້ ຫຼື ຕໍ່ອາຍຸໃບອະນຸຍາດນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ອນວັນໝົດອາຍຸ 30 ວັນລັດຖະການຂອງໃບອະນຸຍາດ.

**ມາດຕາ 9 ການຖອນຄືນໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສາມາດຖອນຄືນໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຕາມກໍລະນີ ດັ່ງນີ້:

9.1. ບໍ່ປະຕິບັດຕາມເງື່ອນໄຂທີ່ລະບຸໄວ້ໃນໃບອະນຸຍາດ, ນຳໃຊ້ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

9.2. ບໍ່ເສຍຄ່າທຳນຽມ ແລະ ຄ່າບໍລິການນຳໃຊ້ ຕາມລັດຖະບັນຍັດ ແລະ ຕາມລະບຽບການ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວາງອອກໃນແຕ່ລະໄລຍະ;

9.3. ບໍ່ຕໍ່ໃບອະນຸຍາດນຳໃຊ້ເລກໝາຍພິເສດ ກາຍ 30 ວັນລັດຖະການ.

## ໝວດທີ 3
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 10 ຄ່າທຳນຽມ ແລະ ຄ່າບໍລິການ**

ຜູ້ໄດ້ຮັບໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ ຕ້ອງເສຍຄ່າທຳນຽມ, ຄ່າບໍລິການນຳໃຊ້ ຕາມລັດຖະບັນຍັດ ຂອງ ປະທານປະເທດ ແລະ ລະບຽບການ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວາງອອກໃນແຕ່ລະໄລຍະ;

ກໍລະນີຜູ້ຮັບໃບອະນຸຍາດ ບໍ່ປະຕິບັດການເສຍຄ່າທຳນຽມ ຄົບຖ້ວນຕາມຈຳນວນ ແລະ ຕາມກຳນົດເວລາ; ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະເຮັດໜັງສືແຈ້ງເຕືອນ ແລະ ຖອນຄືນໃບອະນຸຍາດນຳໃຊ້ເລກໝາຍໂທລະສັບພິເສດ.

**ມາດຕາ 11 ການຍົກເວັ້ນຄ່າທຳນຽມ ແລະ ຄ່າບໍລິການ.**

ຄ່າທຳນຽມ ແລະ ຄ່າບໍລິການເລກໝາຍໂທລະສັບພິເສດ ຈະຖືກຍົກເວັ້ນໃນກໍລະນີນຳໃຊ້ສຳລັບວຽກງານດັ່ງຕໍ່ໄປນີ້:

11.1. ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ວຽກງານ ຂອງ ອົງການຈັດຕັ້ງລັດ;

11.2. ວຽກງານສຸກເສີນ, ວຽກງານບໍລິການສາທາລະນະຈຳນວນໜຶ່ງ, ວຽກງານຊ່ວຍເຫຼືອສັງຄົມ, ວຽກງານປ້ອງກັນ ແລະ ສະກັດກັ້ນ ໄພພິບັດທາງທຳມະຊາດ;

11.3. ວຽກງານອື່ນ ຂອງອົງການຈັດຕັ້ງລັດ ຕາມການເຫັນດີ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ໝວດທີ 4

## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 12 ຂໍ້ຫ້າມ

ຫ້າມຜູ້ໄດ້ຮັບໃບອະນຸຍາດມີການກະທຳ ດັ່ງນີ້:

12.1 ນຳໃຊ້ເລກໝາຍບໍ່ສອດຄ່ອງຕາມເນື້ອໃນທີ່ລະບຸໄວ້ໃນໃບອະນຸຍາດ;

12.2 ໂອນເລກໝາຍ ຫຼື ໃບອະນຸຍາດໃຫ້ຜູ້ອື່ນ ໂດຍບໍ່ໄດ້ແຈ້ງ ຫຼື ໄດ້ຮັບການເຫັນດີ ຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ອນ;

12.3 ນຳໃຊ້ບໍລິການເລກໝາຍໂທລະສັບພິເສດໂທອອກ ຫຼື ຮັບສາຍໂທເຂົ້າຈາກຕ່າງປະເທດ.

### ມາດຕາ 13 ນະໂຍບາຍຕໍ່ຜູ້ມີຜົນງານ

ນິຕິບຸກຄົນ ແລະ ອົງການຈັດຕັ້ງລັດ ທີ່ໄດ້ຮັບອະນຸຍາດນຳໃຊ້ບໍລິການເລກໝາຍພິເສດປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຈະໄດ້ຮັບການສືບຕໍ່ອອກອະນຸຍາດໃຫ້ບໍລິການນຳໃຊ້ເລກໝາຍ ຫຼື ໄດ້ຮັບນະໂຍບາຍອື່ນ ຕາມຄວາມເໝາະສົມ.

### ມາດຕາ 14 ມາດຕະການຕໍ່ຜູ້ລະເມີດ

14.1 ນິຕິບຸກຄົນ ຫຼື ອົງການຈັດຕັ້ງລັດ ທີ່ລະເມີດຂໍ້ໃດໜຶ່ງໃນຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ ເຊັ່ນ:

1. ນຳໃຊ້ບໍລິການເລກໝາຍໂທລະສັບພິເສດ ບໍ່ສອດຄ່ອງຕາມຈຸດປະສົງ ທີ່ລະບຸໄວ້ໃນໃບອະນຸຍາດ;
2. ບໍ່ເສຍຄ່າທຳນຽມ ແລະ ຄ່າບໍລິການ ຄົບຖ້ວນ ແລະ ເປັນປົກກະຕິ.

14.2 ນິຕິບຸກຄົນ ຫຼື ອົງການຈັດຕັ້ງລັດ ທີ່ລະເມີດຂໍ້ໃດໜຶ່ງໃນຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ລັດ ແລະ ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ແລະ ຖອນໃບອະນຸຍາດຖາວອນ ຕາມແຕ່ລະກໍລະນີທີ່ຕົນໄດ້ກໍ່ຂຶ້ນເຊັ່ນ:

1. ເປີດນຳໃຊ້ບໍລິການເລກໝາຍໂທລະສັບພິເສດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ປອມແປງ, ດັດແປງ ເນື້ອໃນ ຫຼື ໂອນໃບອະນຸຍາດ ໃຫ້ຜູ້ອື່ນນຳໃຊ້ໂດຍບໍ່ໄດ້ຮັບການເຫັນດີ ຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
   ອັດຕາຄ່ານຳໃຊ້ ແລະ ຄ່າປັບໃໝໄດ້ກຳນົດໄວ້ ໃນລະບຽບການຕ່າງຫາກ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມໂທລະຄົມມະນາຄົມ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ